**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

ເລກທີ 667 /ຫຄຊກລ.ຄພ.
ນະຄອນຫລວງວຽງຈັນ, ວັນທີ: 17 ສິງຫາ 2023.

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ.

**ເລື່ອງ:** ຜົນຂອງການລົງຕິດຕາມກວດກາການເຄື່ອນໄຫວ ຂອງອົງການ NPA ປະຈຳແຂວງ ສາລະວັນ.

## I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 602/ຫຄຊກລ ລົງວັນ 28 ກໍລະກົດ 2023 ໃນວັນທີ 02 ຫາ 10 ສິງຫາ 2023, ໜ່ວຍງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ສົມທົບກັບອົງການ NPA ປະຈຳແຂວງ ສາລະວັນ, ໄດ້ລົງເຄື່ອນໄຫວຊຸກຍູ້, ກວດກາຕິດຕາມການຈັດຕັ້ງປະຕິບັດວຽກງານການເກັບກູ້ ແລະ ທຳລາຍລະເບີດ ຢູ່ແຂວງ ສາລະວັນ,

**ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:**

1. ທ່ານ ບຸນທະວີ ແກ້ວວິໄລ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
2. ທ່ານ ບຸນປອນ ທຳມະວົງສາ ແພດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
3. ທ່ານ ຕຸ້ຍ ໄຊຍະສານ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
4. ທ່ານ ສົມຕິ ແກ້ວວິໄຊ ຂັບລົດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
5. ທ່ານ ເຂັມພອນ ພະສີວົງມີໄຊ ແພດ/ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
6. ທ່ານ ວົງເມືອງ ຍໍລະສິນ ຄະນະຫ້ອງການ ຄຄກລ ແຂວງສາລະວັນ;
7. ທ່ານ ວິໄລວັນ ມົ່ງສຸວັນ ຄະນະວິຊາການ ຄຄກລ ແຂວງສາລະວັນ.

**ຜູ້ຕິດຕາມຈາກ ຄກລ ແຂວງ ສາລະວັນ:**

1. ທ່ານ ສຸກສົມສີ ວິຊາການຜູ້ຊີ້ນຳວຽກງານພາກສະໜາມ ອົງການ NPA;
2. ທ່ານ ນາງ ສາຍຈາ ແກ້ວອຸ່ນຫຼ້າ ຫົວໜ້າແພດພາກສະໜາມອົງການ NPA.

## II. ຈຸດປະສົງໃນການຕິດຕາມກວດກາ

ເພື່ອເປັນການຊຸກຍູ້ຕິດຕາມກວດກາການປະຕິບັດງານ, ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການເຊັ່ນ: ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການສຳຫຼວດ, ເກັບກູ້,ທຳລາຍ ລບຕ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ເພື່ອຊຸກຍູ້ປັບປຸງການປະຕິບັດງານ, ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນປະຈຳປີ 2023, ເພື່ອຄອບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

- **ຈຳນວນພະນັກງານ ແລະ ຄຸນວຸດທິພະນັກງານ**

ອົງການ NPA ປະຈຳແຂວງ ສາລະວັນ ມີພະນັກງານທັງໝົດ 224 ຄົນ ຍິງ 61 ຄົນ, ພະນັກງານຫ້ອງການມີ 07 ຄົນ, ຍິງ 01 ຄົນ, ພະນັກງານປະຈຳສະໜາມມີ 217 ຄົນ, ຍິງ 60 ຄົນ, ປະກອບທີມງານໂຄສະນາສຶກສາຄວາມສ່ຽງ 01 ທີມ ສຳຫຼວດບໍ່ແມ່ນວິຊາການ 02 ທີມ, ເກັບກູ້ 11 ທີມ, ທີມຕັດຫຍ້າ 10 ທີມ, ມີແມ່ບ້ານ ແລະ ນາຍຍາມ. ການປະກອບໂຄງຮ່າງຈັດການຕັ້ງແມ່ນຖືກຕ້ອງ ແລະ ວິຊາການເກັບກູ້ທັງໝົດທີ່ກ່າວມານັ້ນໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.

- **ກວດກາລະບົບເອກະສານ**

ອົງການ NPA ປະຈຳແຂວງ ສາລະວັນ ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບ ເຊັ່ນ: ແມ່ນບົດລາຍງານການສຳຫຼວດຂັ້ນສອງ, ບົດລາຍງານຜົນສຳເລັດຂັ້ນສາມ ແບບຟອມຄວບຄຸມຄຸນນະພາບພາຍໃນ, ປຶ້ມບັນທຶກປະຈຳວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈງໄດ້, ແຜນຮອງຮັບອຸບັດຕິເຫດ, ໝວດເລືອດ, ອາການແພ້ຕ່າງໆຂອງພະນັກງານ, ມີບັນດາເອກະສານການປະເມີນວຽກງານເກັບກູ້ອື່ນທີ່ກຳລັງພັດທະນາໃໝ່ ເຫັນວ່າມີເນື້ອໃນຄົບຖ້ວນຕາມມາດຕະຖານການປະຕິບັດງານທີ່ໄດ້ກຳນົດໄວ້.

- **ການເຄື່ອນໄຫວຕາມແຜນປີ 2023.**

ການເຄື່ອນໄຫວວຽກງານແມ່ນປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ໃນປີ 2023 - 2024 ເຊິ່ງມີໄລຍະ 18 ເດືອນ ທີ່ໄດ້ເຄື່ອນໄຫວຢູ່ 08 ຕົວເມືອງຂອງແຂວງ ສາລະວັນ ຄື: ເມືອງ ສາລະວັນ, ຈະໂອ້ຍ, ສະໝ້ວຍ, ຕຸ້ມລານ, ຄົງເຊໂດນ, ວາປີ, ເລົ່າງາມ ແລະ ເມືອງລະຄອນເພັງ, ເຊິ່ງມີແຜນເຄື່ອນໄຫວວຽກງານດັ່ງນີ້:

ການເກັບກູ້ ລບຕ ໃນພື້ນທີ່ຢືນຢັນວ່າມີຄວາມສ່ຽງ 80 CHA ກວມເອົາ 41 ບ້ານ, ເນື້ອທີ່ເກັບກູ້ທັງໝົດ 8,398,123 $ມ^2$ ເຊິ່ງໄດ້ຮັບທຶນສະໜັບສະໜູນຈາກລັດຖະບານສະຫະລັດອາເມລິກາ, ປັດຈຸບັນປະຕິບັດໄດ້ 13 ບ້ານ, ກວດກູ້ເນື້ອທີ່ໄດ້ 142,08 ເຮັກຕາ, ພົບ ລບຕ 1,135 ໜ່ວຍ, ບົມໃຫຍ່ 01 ໜ່ວຍ ແລະ ບົມບີ 1,106 ໜ່ວຍ.

- **ການລົງຕິດຕາມຢູ່ພາກສະໜາມ.**

ລົງຊຸກຍູ້ຕິດຕາມສະໜາມທີ່ກຳລັງປະຕິບັດການເກັບກູ້ ແລະ ທຳລາຍ ລບຕ ທີ່ກວດພົບຢູ່ບ້ານໝາກນາວນ້ອຍ, ເມືອງສາລະວັນ, ຕິດຕາມການປະຕິບັດການສະໜັບສະໜູນທາງດ້ານການແພດ ການຝຶກຕົວຈິງໃນການຊ່ວຍເຫຼືອຄົນເຈັບໃນກໍລະນີເກີດເຫດສຸກເສີນຢູ່ສະໜາມເກັບກູ້ ແລະ ກວດກາອຸປະກອນການແພດ ນອກຈາກນີ້ຍັງໄດ້ລົງຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວ ຈຳນວນ 07 ສະໜາມ ເຊິ່ງມີເນື້ອທີ່ທັງໝົດ 499,391 $ມ^2$, ຄວບຄຸມຄຸນນະພາບຫຼາຍກວ່າ 2% ເທົ່າກັບ 11,175 $ມ^2$, ຢູ່ເມືອງສາລະວັນ, ຕຸ້ມລານ, ເລົ່າງາມ ແລະ ເມືອງຄົງເຊໂດນ ເພື່ອເປັນການຢັ້ງຢືນສະໜາມດັ່ງກ່າວມີຄຸນນະພາບ, ມີຄວາມປອດໄພຕໍ່ຜູ້ນຳໃຊ້ເນື້ອທີ່ດິນ.

## III. ຜົນການກວດກາ

ຜ່ານການລົງຕິດຕາມກວດກາຂອງຄະນະທີມງານສັງເກດເຫັນໄດ້ດັ່ງນີ້:

– **ຈຸດດີ.**

1. ການປະຕິບັດງານຂອງອົງການ NPA ປະຈຳແຂວງ ສາລະວັນ ໄດ້ເຄື່ອນໄຫວວຽກງານແມ່ນປະຕິບັດຕາມມາດຕະຖານການປະຕິບັດງານ ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ.
2. ການຈັດຕັ້ງປະຕິບັດວຽກງານເກັບກູ້ລະເບີດຢູ່ພາກສະໜາມແມ່ນມີຄວາມປອດໄພ.
3. ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ກໍ່ລ້ວນແຕ່ໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.
4. ສະໜາມເກັບກູ້ທີ່ສຳເລັດແລ້ວແມ່ນຜ່ານການຄວບຄຸມ ແລະ ຢັ້ງຢືນຄຸນນະພາບ, ບໍ່ພົບເສດເຫຼັກໃຫຍ່ກວ່າເຄິ່ງໜຶ່ງບົມບີ26 ( ½ blu26 ), ສະໜາມດັ່ງກ່າວແມ່ນມີຄວາມປອດໄພສາມາດນຳໃຊ້ເນື້ອທີ່ດິນຕາມຈຸດປະສົງໃນຄວາມເລິກຂອງລະບຽບການເກັບກູ້ 25 ຊັງຕີແມັດ.
5. ການນຳສະເໜີລາຍງານຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ, ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ, ສະຖານທີປະຕິບັດທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື່ອ, ວິດຖ່າຍ, ບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ ແລະ ບ່ອນເກັບມ້ຽນລະເບີດທີ່ເຄື່ອນຍ້າຍໄດ້, ສິ່ງທີ່ກ່າວຂ້າງເທິງມານັ້ນເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດ.

– **ຂໍ້ຄົງຄ້າງ.**

1. ໃນອະນາຄົດສະເໜີໃຫ້ອົງການເອັນພີເອ ຕ້ອງກຳນົດພື້ນທີ່ງຢືນຢັນວ່າອັນຕະລາຍ ( CHA ) ຕ້ອງກອມເອົາບ້ອກ ທີ່ເປັນສີເຫຼືອງທັງໝົດ, ເພາະບ້ອກດັ່ງກ່າວມີຄວາມເປັນໄປໄດ້ທີ່ຈະພົບ ລບຕ ຕົກຄ້າງໄດ້;
2. ການຝຶກຊ້ອມແຜນເຄື່ອນຍ້າຍຄົນເຈັບປະຈຳສະໜາມເຫັນວ່າ ຫົວໜ້າທີມແມ່ນບໍ່ສາມາດຕິດຕໍ່ຫ້ອງການປະຕິບັດໄດ້ເນື່ອງຈາກວ່າ ຜູ້ກ່ຽວບໍ່ມີເບີຕິດຕໍ່ຂອງຫ້ອງການປະຕິບັດງານ;
3. ການຝຶກຊ້ອມແຜນຮັບມືອຸປະຕິເຫດປະຈຳເດືອນ 07 ທາງອົງການ ເອັນພີເອ ປະຈຳແຂວງ ສາລະວັນ ແມ່ນບໍ່ມີການຝຶກຊ້ອມ, ອຸປະກອນການແພດຢູ່ສະໜາມເຫັນວ່າບາງທີມງານຍັງບໍ່ມີ ເປັນຕົ້ນແມ່ນເຄືອງດູດຂີ້ຊະເຫຼດ.
4. ຕໍ່ບັນຫາທີ່ກວດພົບເຫັນໃນຄັ້ງນີ້ແມ່ນໄດ້ຕົກລົງກັນພາຍໃນທ້ອງຖິ່ນແລ້ວ ແລະ ທາງອົງການ NPA ປະຈຳແຂວງ ສາລະວັນ ແມ່ນເຫັນດີເປັນເອກະພາບ ຍິນດີເອົາໄປປັບປຸງແກ້ໄຂຕາມການແນະຂອງຄະນະກວດກາໜ່ວຍງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຊາບ

**ຫົວໜ້າຫ້ອງການ ຄຊກລ.**

**ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ.**

ຫ້ອງການ ຄຊກລ

ໂຈມແຍງ ແພງທອງສະຫວັດ

ບ່ອນສົ່ງ:

ສົ່ງ ເອັນພີເອສູນກາງ 1 ສະບັບ ເພື່ອລາຍງານ.

ສົ່ງ ເອັນພີເອ ແຂວງ ສາລະວັນ 1 ສະບັບ ເພື່ອຈັດຕັ້ງປະຕິບັດ.

ຫ້ອງການ ຄຄກລຂ ເກັບມ້ຽນ 1 ສະບັບ

ຫ້ອງການ ຄຊກລ ເພື່ອເກັບມ້ຽນ 1 ສະບັບ. ເພື່ອລາຍງານ.ບ້ານ ທົ່ງສ້າງນາ, ຕູ້ປນ: 7261, ນະຄອນຫຼວງ, ໂທລະສັບ: 856 21 262416, 262 386, ແຟັກ: 856 21 262 386,

ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la